ຮອງລັດຖະມົນຕີ ກ ວ ຕ ລົງຢ້ຽມຢາມ ແລະ ຊຸກຍູ້ວຽກຢູ່ ພວຕ ແຂວງບໍ່ແກ້ວ
Written by Administrator
Thursday, 15 February 2018 09:39 - Last Updated Thursday, 15 February 2018 10:46
ວັນທີ 13 - 14 ກຸມພາ 2018 ທີ່ຜ່ານມານີ້ ທ່ານ ບູນຕີ ທະມິດ ຮອງລັດຖະມົນຕີ ກະຊວງ
ວິທະຍາສາດ ແລະ ເຕັກໂນໂລຊີ ພ້ອມດ້ວຍຄະນະທີມງານ ກົມມາດຕະຖານ ແລະ ການວັດແທກ
ໄດ້ລົງມາຢ້ຽມຢາມ ແລະ ຊູກຍູ້ວຽກງານ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງບໍ່ແກ້ວ.
 ໂດຍໃຫ້ກຽດຕ້ອນຮັບຂອງ ທ່ານ ຄອນໄຊ ສະຕິ ຫົວໜ້າ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ
ແຂວງບໍ່ແກ້ວ, ພ້ອມດ້ວຍພະນັກງານ-ວິຊາການໝົດທຸກທ່ານ. ຕອນເຊົ້າວັນທີ່ 14 ກຸມພາ 2018
ຢູ່ທີ່ຫ້ອງປະຊຸມ ພວຕ ກອງປະຊຸມໄດ້ຈັດຂຶ້ນໂດຍການເປັນປະທານ ຂອງທ່ານ ບູນຕີ ທະມິດ
ຮອງລັດຖະມົນຕີ ກວຕ. ທ່ານ ຄອນໄຊ ສະຕິ ຫົວໜ້າ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ
ແຂວງບໍ່ແກ້ວ ໄດ້ລາຍງານ ວຽກງານການຈັດຕັ້ງ ແລະ ການເຄື່ອນໄຫວດ້ວຍຫຍໍ້ ຂອງພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີ ໃນໄລຍະຜ່ານມາ ຕໍ່ກອງປະຊຸມ, ເຊີ່ງໄດ້ສະແດງອອກ
ເຖີງການຈັດຕັ້ງນໍາພາ, ການເຄື່ອນໄຫວວຽກງານ ມີຜົນສໍາເລັດ ແລະ
ມີບາງໜ້າວຽກທີ່ຈະຕ້ອງໄດ້ສືບຕໍ່ຊຸກຍູ້, ແກ້ໄຂໃຫ້ໄດ້ດີກວ່າເກົ່າ;
ໂດຍສະເພາະແມ່ນວຽກງານຊັບສີນທາງປັນຍາ ມາດຕະຖານ ແລະ ວັດແທກ,
ຈະຕ້ອງໄດ້ຊຸມໃສ່ຢ່າງຕັ້ງໜ້າ ແລະ ເຮັດຫຼ້ອນໜ້າທີ່ ເພື່ອບໍໃຫ້ມີການລັກລ້ອມ ແລະ
ເອົາປຽບລະຫວ່າງຜູ້ຊື້ ແລະ ຜູ້ຂາຍ ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ.
ໃນໂອກາດດຽວກັນນີ້ ທ່ານ ວຽງທອງ ວົງທະວິໄລ ຮັກສາການ ຫົວໜ້າກົມ ມາດຕະຖານ ແລະ
ການວັດແທກ ໄດ້ການລາຍງານ ຊີ້ແຈ້ງຕື່ມອີກ ກຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດ
ວຽກງານຊັບສີນທາງປັນຍາ ມາດຕະຖານ ແລະ ການວັດແທກ, ເຊີ່ງທ່ານໄດ້ຍົກໃຫ້ເຫັນຫຼາຍບັນຫາ
ທັງດ້ານດີ ແລະ ດ້ານທີ່ພວວກເຮົາຈະຕ້ອງເອົາໃຈໃສແກ້ໄຂ,
ເພາະວຽກດັ່ງກ່າວມັນເປັນວຽກທີ່ຫຼໍແຫຼມ ແລະ
ມີໂອກາດສູງທີ່ຜູ້ປະກອບການຈະສວຍໃຊ້ໄປໃນທາງທີ່ບໍ່ຖືກຕ້ອງ,
ເພາະສະນັ້ນພວກເຮົາເຊີ່ງໄດ້ຮັບມອບໝາຍຈາກພາກ-ລັດ ໃນການຄຸ້ມຄອງ ແລະ
ເຄື່ອນໄຫວວຽກດັ່ງກ່າວ ພວກເຮົາກໍ່ຕ້ອງໄດ້ເຮັດ ຕາມພາລະບົດບາດ ສິດ ແລະ
ໜ້າທີ່ຂອງຕົນໃຫ້ໄດ້ດີ ພ້ອມທັງຄຸ້ມຄອງ ແລະ ຊຸກຍູ້ວຽກງານດັ່ງກ່າວໄປພ້ອມໆກັນ.
 ຕອ້ນທາຍ ກອງປະຊຸມຍັງໄດ້ຮັບຟັງຄໍາເຫັນໂອ້ລົມ ຂອງທ່ານ ບູນຕີ ທະມິດ ຮອງລັດຖະມົນຕີ
ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ, ເຊີ່ງທ່ານໄດ້ຕີລາຄາສູງໃນການລົງມາຢ້ຽມຢາມ ແລະ
ເຮັດວຽກ ຂອງຄະນະທີມງານກະຊວງໃນຄັ້ງນີ້ ແລະ
ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດທີ່ທາງ ພວຕ ແຂວງບໍ່ແກ້ວ ທີ່ຍາດແຍງໄດ້
ໃນໄລຍະຜ່ານມາ, ແລະ ທ່ານຍັງໄດ້ຮຽກຮອງມາຍັງຄະນະພັກ ຄະນະນໍາ ພະແນກ ໃຫ້ສືບຕໍ່ເອົາໃຈໃສ່
ຊີ້ນໍາ ນໍາພາອ້າຍນ້ອງພະນັກງານຂອງຕົນໃຫ້ດີຂຶ້ນເລື້ອຍໆ ເປັນຕົ້ນຄວາມຮັກແພງສາມັກຄີ
 1 / 2

ຮອງລັດຖະມົນຕີ ກ ວ ຕ ລົງຢ້ຽມຢາມ ແລະ ຊຸກຍູ້ວຽກຢູ່ ພວຕ ແຂວງບໍ່ແກ້ວ
Written by Administrator
Thursday, 15 February 2018 09:39 - Last Updated Thursday, 15 February 2018 10:46
ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພະນັກງານໜຸ່ມນ້ອຍ
ກໍ່ຕ້ອງໄດ້ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນພະນັກງານສືບທອດ ແລະ ຊໍານິ ຊໍານານງານ.

ຂຽນຂ່າວໂດຍ: ປະກາສິດ ທໍາມະວົງ
 2 / 2